ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 055./ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 01 JUN 2021

# ໜັງສືແຈ້ງເຊີນ

ເຖິງ: ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງອຸປະກອນໄອທີ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍອຸປະກອນໄອທີ ເພື່ອມານໍາໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

1. SAN storage ຈໍານວນ 02 ຊຸດ.

| PRODUCT | SPECIFICATION | |
|---|---|---|
| SAN Storage | Quantity | 2 |
| | Brand | IBM |
| | Model | Flash System 7200 |
| | Controller | 2 |
| | Cache | 1.5 TB |
| | Drive Type (NVMe SSD) | 7.68 TB |
| | Drive Amount (NVMe SSD) | 12 |
| | Drive Type (NVMe FCM) | 9.6 TB |
| | Drive Amount (NVMe FCM) | 12 |
| | Support RAID | DRAID 1, 5 and 6 with dynamic DRAID expansion and TRAID 1 and 10 |
| | Protocol | FC, iSCSI |
| | Network Interface 25Gbps Ethernet | x2 PCI Cards or Built-in, 2 Ports / PCI Card (Total: 4 port) |
| | FC Storage Card HBA 32G Gbps include Transceiver Module | x6 PCI Cards, 4 Ports / Card (Total: 24 port ) |
| | Power Supplies | 2 |
| | Power Cable 2 meters | C13 - C14 |
| | Feature + License | Deduplication, Compress, Snapshot, Clone, Remote Replicate, Encryption, External Virtualization |
| | Support + MA | 3 years (Hardware and Software) |



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | |
|---|---|---|
| | Implementation | Required |
| | Support Document | - Prove of Experience on Data Migration from IBM Storage to new Storage<br>- Data Migration plan |

**Post Sale Support**

| PRODUCT | SPECIFICATION | |
|---|---|---|
| **Post Sale Support** | Vendor's engineer(s) | Provides access to Vendor's badged Engineer(s) by<br>- Chat group<br>- Phone<br>- Email<br>- Remote Assistance |
| | Hardware warranty and maintenance | 3 years hardware and software warranty<br>- SLA: 9x5 Next Business Day<br>- Onsite hardware repair or parts exchange by Vendor's Authorized Service Provider |
| | Open Case | Can open case via following channels; Web, Chat or Phone |
| | Escalation | Case(s) can be escalated based on severity level |
| | Support Team | Support team member should have following certifications:<br>- RedHat Certified Engineer or<br>- IBM AIX Certified Administrator |

**2. SAN Switch ຈຳນວນ 01 ຊຸດ.**

| PRODUCT | SPECIFICATION | |
|---|---|---|
| **SAN Switch** | Quantity | 2 |
| | Brand | IBM Storage Networking SAN128B-6 |
| | Model | OEM Brocade G630 (Gen 6) 32 Gbps |
| | Transceiver | 96 ports (per unit) |
| | Air Flow | Front-to-Rear |
| | SAN Switch | Full Enable 96 Ports<br>Full Fabric License |
| | FC Cables<br>5 meters OM3 or OM4 FC cable same brand as SAN Switch | 32 cables (per unit) |
| | FC Cables<br>10 meters OM3 or OM4 FC cable same brand as SAN Switch | 48 cables (per unit) |
| | FC Cables<br>25 meters OM3 or OM4 FC cable same brand as SAN Switch | 16 cables (per unit) |
| | Implementation | Required |

| | | |
|---|---|---|
| | Support + MA | 3 years (Hardware and Software) |

**Post Sale Support**

| PRODUCT | SPECIFICATION | |
|---|---|---|
| **Post Sale Support** | Vendor's engineer(s) | Provides access to Vendor's badged Engineer(s) by<br>- Chat group<br>- Phone<br>- Email<br>- Remote Assistance |
| | Hardware warranty and maintenance | 3 years hardware and software warranty<br>- SLA: 9x5 Next Business Day<br>- Onsite hardware repair or parts exchange by Vendor's Authorized Service Provider |
| | Open Case | Can open case via following channels; Web, Chat or Phone |
| | Escalation | Case(s) can be escalated based on severity level |
| | Support Team | Support team member should have following certifications:<br>- RedHat Certified Engineer or<br>- IBM AIX Certified Administrator |

## 3. Extension Drive ຈຳນວນ 4 ເຄື່ອງ

### 3.1. SAN Storage Extension Drive

| | |
|---|---|
| Existing Model | Huawei OceanStor Dorado 6000 V6 |
| Drive Type | 15.36 TB NVMe SSD |
| Drive Amount | 12 |
| Supported RAID Levels | RAID 5, RAID 6, RAID 10*, and RAID-TP |
| Power Supplies | 2 |
| Support + MA | 3 years (Software + Hardware) |
| Implementation | Required |

### 3.2. SAN Storage Extension Drive

| | |
|---|---|
| Existing Model | Huawei OceanStor Dorado 5000 V6 |
| Drive Type | 15.36 TB NVMe SSD |
| Drive Amount | 12 |
| Supported RAID Levels | RAID 5, RAID 6, RAID 10*, and RAID-TP |
| Support + MA | 3 years (Software + Hardware) |
| Implementation | Required |

### 3.3. NAS Storage Extension Drive

| | |
|---|---|
| Existing Model | Huawei OceanStor Dorado 5300 V5 |
| Drive Type | 7.68 TB SAS SSD |
| Drive Amount | 12 x2 (Total 24 Drives) |
| Supported RAID Levels | RAID 0,1,2,3,5,6,10,50 |
| Support + MA | 3 years (Software + Hardware) |
| Implementation | Required |

- ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:

❖ <u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ ປີ 2019, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງ SAN Storage, SAN Switch ໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ ກ່ອນວັນສຸກ, ວັນທີ **18/06/2021** ເວລາ **11:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C.

❖ <u>ເອກະສານຊອງທີ 2 (ປິດຊອງ)</u>:

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.
2. ວັນພະຫັດ, ທີ **24/06/2021** ເວລາ **9:30** ໂມງ ແມ່ນມື້ເປີດຊອງປະມູນ, ສະນັ້ນ ໃຫ້ບໍລິສັດ/ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ຕຶກ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນ, Hardware & Software ຕ່າງໆ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 24/07/2021)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

<u>ໝາຍເຫດ:</u> ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

- ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:

  - ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍໃນ 30 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ຕິດຕັ້ງສຳເລັດ.
  - ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ປະທານຄະນະກຳມະການປະມູນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນັນທະລາດ ແກ້ວປະເສີດ

ສອບຖາມລາຍລະອຽດເພີ່ມເຕີມ ກ່ອນ**ວັນທີ 18/06/2021**:

E-mail: itcenter@bcel.com.la (ສຳລັບສອບຖາມສະເປັກ) ,

bidcommittee@bcel.com.la